

# The Apostles' Doctrine

## ບົດສອນຂອງພວກອັຄສາວົກ

## ຄຳແນະນຳ

ປື້ມຫົວນີ້ໄດ້ພີມອອກມາແລະໄດ້ຮວບຮວມດ້ວຍການອະທິຖານຢ່າງສຸດໃຈ ເພື່ອມັນຈະຊ່ອຍຊູຈິດໃຈແລະກໍ່ສ້າງຄົນເຊື່ອເພີ່ມຂື້ນແລະອາດຈະເພີ້ມເຕີມແສງສວ່າງໃຫ້ແກ່ພັນກວ່າຄົນທີ່ໄດ້ເຄີຍເຄົາຣົບແລະນັບຖືຮີດຄອງປະເພນີທີ່ມະນຸດໄດ້ແຕ່ງຕັ້ງຂື້ນມານັ້ນ ແລະໃຫ້ເຂົາໄດ້ເຂົ້າມາພົບຄວາມຈິງໃນຄຳສອນຂອງອົງພຣະເຢຊູຄຣິດພຣະເຈົ້າຂອງເຮົາ.

ເວົ້າຕາມຄວາມຈິງແລ້ວພວກເຮົາທຸກຄົນຢາກຈະໄປເຖິງສວັນ. ດັ່ງນັ້ນແລ້ວໃຫ້ພວກເຮົາຈົ່ງເອົາໃຈໃສ່ພຣະທັມຂອງຜູ້ປະກາດພຣະທັມເທດສນາວ່າ,

"ພວກເຈົ້າຈົ່ງຢືນຢູ່ໃນທາງສີ່ແຍກໃຫ້ຖາມຫາທາງດີ ຄືທາງເກົ່ານັ້ນຢູ່ໃສ? ແລ້ວໃຫ້ຍ່າງເຂົ້າໄປທາງນັ້ນພວກເຈົ້າຈະມີຄວາມສງົບສຸກ"
[ເຢເຣມີຢາ 6:16].

## ການສອນຂອງພວກອັດສາວົກເຖິງເລື່ອງ...

### ...ພຣະທັມຄັມພີ

ພຣະຄັມພີແມ່ນປຶ້ມທີ່ໄດ້ບັນດົນໃຈ ເປັນພຣະທັມຂອງພຣະເຈົ້າ,ໄດ້ບອກປະຫວັດສາດທີ່ແທ້ຈິງໃນເລື້ອງການສ້າງພ້າສວັນ,ແຜ່ນດິນໂລກ,ແລະຄວາມເປັນຂອງມະນຸດໂລກ ແລະທຳນວາຍຖືກຕ້ອງໃນການເວລາຂອງຟ້າສວັນ, ແຜ່ນດິນໂລກ, ແລະຈຸດໝາຍປາຍທາງຂອງມະນຸດສະໂລກທີ່ເປັນມານັ້ນ.

ຫຼາຍກວ່ານັ້ນອີກ, ບໍ່ມີຄວາມລອດພົ້ນຈາກບາບນອກຈາກອັນທີ່ໄດ້ສອນແລ້ວຢູ່ໃນປຶ້ມພຣະທັມຄັມພີນີ້.

### ...ພຣະເຈົ້າ

ມີພຣະເຈົ້າອົງດຽວເທົ່ານັ້ນ [ພຣະບັນຍັດສອງ 6:4].ພຣະອົງຊົງເປັນຜູ້ສ້າງພ້າສວັນແລະແຜ່ນດິນໂລກ, ແລະທຸກສິ່ງທຸກຢ່າງທີ່ມີຊີວິດຢູ່ນັ້ນ. ພຣະອົງໄດ້ສະແດງພຣະອົງເອງໃນການເປັນມະນຸດເໝືອນດັ່ງພຣະບິດາ [ເປັນຜູ້ສ້າງ], ເປັນພຣະບຸດ[ພຣະຜູ້ຊ່ອຍ], ແລະເປັນພຣະວິນຍານບໍຣິສຸດ [ພຣະວິນຍານສະຖິດຢູ່ນຳ].

### ...ພຣະບິດາ

ພຣະເຈົ້າເປັນພຣະວິນຍານ [ໂຢຮັນ 4:24].ພຣະອົງຊົງເປັນຢູ່ຕລອດໄປເປັນນິດເປັນຜູ້ສ້າງສັພທຸກສິ່ງ, ແລະເປັນພຣະບິດາຂອງມະນຸດທັ້ງໝົດດ້ວຍທາງເນລະມິດສ້າງ.

"ເຮົາເປັນຜູ້ຕົ້ນ ເປັນຜູ້ປາຍ ເປັນພຣະເຈົ້າແຕ່ຜູ້ດຽວ ບໍ່ມີພຣະເຈົ້າອົງອື່ນນອກຈາກເຮົາ" [ເອຊາຢາ 44:6].

"ນອກຈາກເຮົາແລ້ວບໍ່ມີພຣະເຈົ້າອົງອື່ນອີກກ່ອນແລະຫຼັງເຮົາບໍ່ເຄີຍມີພຣະເຈົ້າຈັກເທື່ອ" [ເອຊາຢາ 43:10].

ພຣະເຢຊູຊົງເປັນພຣະບຸດຂອງພຣະເຈົ້າໃນພຣະຮ່າງກາຍຂອງພຣະອົງ [ໂຣມ 1:3] ແລະພຣະອົງເອງຊົງເປັນພຣະເຈົ້າທຸກຢ່າງໃນຈິດວິນຍານ [ມັດທາຍ 1:23]. ພຣະເຢຊູຊົງເປັນພຣະຄຣິດ [ມັດທາຍ 16:16]. ຊົງເປັນຜູ້ສ້າງສັພທຸກສິ່ງ[ໂກໂລຊາຍ 1:16-17].ພຣະເຈົ້າສະຖິດຢູ່ກັບເຮົາ [ມັດທາຍ 1:23]. ພຣະເຈົ້າຊົງບັງເກີດເປັນເນື້ອຫນັງ [ໂຢຮັນ 1:1-14]. ພຣະເຈົ້າຊົງປະກົດເປັນເນື້ອຫນັງ [1 ຕີໂມທຽວ 3:16]. ອົງພຣະຜູ້ເປັນເຈົ້າຜູ້ຊົງດຳຣົງຢູ່ໃນປັດຈຸບັນ, ຜູ້ຊົງດຳຣົງຢູ່ໃນອະດີດຜູ້ຈະສະເດັດມາໃນອະນາຄົດ, ແລະຜູ້ຊົງຣິດທະນຸພາບສູງສຸດ [ພຣະນິມິດ 1:8].

ພຣະເຈົ້າຜູ້ຊົງຣິດ,ອົງເປັນພຣະບິດາຕລອດໄປ, ອົງສັນຕິລາດ [ເອຊາຢາ 9:6].

ພຣະເຢຊູເອງກໍໄດ້ເປັນພະຍານເຖິງສະພາບດັ່ງພຣະເຈົ້າໃນເມື່ອພຣະອົງໄດ້ເວົ້າວ່າ "ຜູ້ໃດທີ່ໄດ້ເຫັນເຮົາກໍໄດ້ເຫັນພຣະບິດາ"[ໂຢຮັນ 14:7-11]. ແລະ "ເຮົາກັບພຣະບິດາກໍເປັນຜູ້ດຽວ" [ໂຢຮັນ 10:30].

ມັນຕ້ອງໄດ້ມີການຕົກເລືອດເພື່ອຈະມີຄວາມອະພັຍ ຄວາມຜິດບາບໄດ້ທັງໂລກ[ເຮັບເຣີ 9:22].

ແຕ່ວ່າພຣະເຈົ້າຊົງເປັນພຣະບິດານັ້ນແມ່ນພຣະວິນຍານແລະບໍ່ມີເລືອດທີ່ຈະຕົກ. ດັ່ງນັ້ນພຣະອົງກໍໄດ້ຈັດຕຽມພຣະຮ່າງກາຍເປັນເນື້ອຫນັງແລະເລືອດ [ເຮັບເຣີ 10:5]ແລະໄດ້ມາໃນໂລກເປັນເໝືອນຢ່າງມະນຸດເພື່ອຈະຊ່ອຍພວກເຮົາໃຫ້ລອດ,ເພາະຢູ່ໃນ ເອຊາຢາ 43:11 ພຣະອົງໄດ້ເວົ້າວ່າ,"ນອກຈາກເຮົາບໍ່ມີພຣະຜູ້ຊ່ອຍອື່ນໃດ".

ໃນເມື່ອພຣະອົງໄດ້ມາເປັນເນື້ອຫນັງພວກເທວາດາໄດ້ຮ້ອງເພງວ່າ, "ເພາະວ່າໃນວັນນີ້ພຣະຜູ້ຊົງໂຜດໃຫ້ພົ້ນອົງນຶ່ງ ຄືພຣະຄຣິດເຈົ້າ ມາບັງເກີດໃນເມືອງດາວິດສຳຫຼັບເຈົ້າທັງຫຼາຍ [ລູກາ 2:11].

...ພຣະວິນຍານບໍຣິສຸດ

ພຣະວິນຍານບໍຣິສຸດບໍ່ແມ່ນຜູ້ທີ່ສາມ ທີ່ຢູ່ໃນການເອົ້າຮວມກັບພຣະເຈົ້າ ແຕ່ວ່າເປັນວິນຍານແຫ່ງພຣະເຈົ້າ[ເປັນຜູ້ສ້າງ],ເປັນວິນຍານທີ່ໃຫ້ພຣະຄຣິດ ຟື້ນຂຶ້ນມາຈາກຕາຍ.

ພຣະວິນຍານບໍຣິສຸດມາອາສັຍຢູ່ໃນໃຈແລະຊີວິດຂອງທຸກຄົນຜູ້ທີ່ເຊື່ອແລະ ເຊື່ອຟັງຂ່າວປະເສີດ,ເປັນເໝືອນດັ່ງຜູ້ປ່ອບໃຈ, ຜູ້ຊ່ອຍຄ້ຳຊູແລະເປັນຜູ້ຮັກສາ [ໂຢຮັນ 14:16-26, ໂຣມ 8:9-11].

...ຄວາມບາບ.

ຄວາມບາບແມ່ນການເຮັດຜິດຝາດຕໍ່ກົດໝາຍຂອງພຣະເຈົ້າຫຼືພຣະບັນຍັດ ຂອງພຣະອົງ[1 ໂຢຮັນ 3:4].

ຄວາມຜິດຂອງຄວາມຜິດບາບໄດ້ຕົກຢູ່ກັບມະນຸດທັງມວນຕັ້ງແຕ່ອາດາມຈົນ ເຖິງດຽວນີ້ [ໂຣມ 3:23].

ຄ່າຈ້າງຂອງຄວາມຜິດບາບຄືຄວາມຕາຍຊົ່ວນິຣັນດອນ ສຳຫຼັບຄົນທົ່ວໄປທີ່ບໍ່ ຍອມຮັບຄວາມລອດພົ້ນດັ່ງທີ່ມີມາຢູ່ໃນພຣະທັມຂອງພຣະເຈົ້າ. [ໂຣມ 6:23,ພຣະນິມິດ 20:14].

...ຄວາມລອດພົ້ນ.

ຄວມລອດພົ້ນຂອງການຊ່ອຍໃຫ້ພົ້ນຈາກຄວາມບາບແລະຄວາມບໍ່ຊອບ ທັມທຸກປະການນັ້ນຢູ່ໃນພຣະໂລຫິດຂອງພຣະເຢຊູຄຣິດ.

ຄວາມສຳນິສຳນານໃນການຊ່ອຍໃຫ້ລອດພົ້ນຈາກຄວາມຜິດບາບໃນພຣະ ສັນຍາໃໝ່ນັ້ນຂຶ້ນຢູ່ໃນການກັບໃຈ, ຮັບບັບຕິສະມາໃນນ້ຳໃນນາມຂອງພຣະ ເຢຊູຄຣິດເພື່ອການຍົກບາບໂທດ, ແລະຮັບພຣະວິນຍານບໍຣິສຸດ, ຫຼັງຈາກນັ້ນ ຜູ້ທີ່ເປັນຄົນຄຣິສຕຽນຈະຕ້ອງຢູ່ຊີວິດບໍຣິສຸດ [ກິຈການ 2:36-41].

## ...ພິທີຂອງການຮັບບັບຕິສະມາ.

ການຮັບບັບຕິສະມານັ້ນມີຂໍ້ອະນຸຍາດໃຫ້ມຸດລົງໄປໃນນໍ້າເທົ່ານັ້ນ. ອາຈານໂປໂລໄດ້ກ່າວວ່າ, "ພວກເຮົາໄດ້ຝັງໄວ້ກັບພຣະອົງ [ພຣະເຢຊູຄຣິດ] ໃນການຮັບບັບຕິສະມາ" [ໂຣມ 6:4, ເບິ່ງ ໂກໂລຊາຍ 2:12].
ພຣະເຢຊູໄດ້ຂຶ້ນມາ ຈາກນໍ້າ [ມາຣະໂກ 1:10], ຟີລິບແລະອີນົອກກໍໄດ້ລົງໄປ ໃນນໍ້າ ແລະກໍໄດ້ຂຶ້ນມາ ຈາກນໍ້າ [ກິຈການ 8:38-39].
ການຕາຍ, ຝັງ, ແລະກັບເປັນຄືນຈາກຕາຍຂອງພຣະເຢຊູຄຣິດໄດ້ໃຊ້ໃນຊີວິດຂອງພວກເຮົາ ໃນເມື່ອພວກເຮົາມີການປະສົບປະການຄວາມລອດພົ້ນໃນພຣະສັນຍາໃໝ່: [ກັບໃຈ] ຕາຍຕໍ່ຄວາມຜິດບາບ,ແລະ[ຮັບບັບຕິສະມາ] ຝັງ ໃນພຣະນາມຂອງພຣະເຢຊູທຸກຄົນເພື່ອການຍົກບາບໂທດ,ແລະ[ທ່ານຈະໄດ້ຮັບຂອງປະທານຄືພຣະວິນຍານບໍຣິສຸດ] ຄືນມາຈາກຕາຍ.
[ຈົ່ງເບິ່ງ ກິຈການ 2:38, ໂຣມ 6:1-7, 8:2].

ສີດນໍ້າໃສ່, ທົດນໍ້າໃສ່, ຫຼືຮັບບັບຕິສະມາໃຫ້ເດັກນ້ອຍອ່ອນແລະອື່ນ ໆຄົ້ນຄວ່າຫາແລ້ວບໍ່ພົບຢູ່ໃນພຣະຄັມພີຂອງພຣະທັມຂອງພຣະເຈົ້າ, ແຕ່ວ່າມັນແມ່ນຮີດຄອງປະເພນີຂອງມະນຸດເທົ່ານັ້ນ.

## ...ແບບແຜນສຳຫຼັບການຮັບບັບຕິສະມາ.

ໃນນາມຊື່ທີ່ໄດ້ຈັດຂຶ້ນມາໃຊ້ໃນການຮັບບັບຕິສະມານັ້ນ, ມັນສຳຄັນຫຼາຍທີ່ສຸດ, ແລະໃນນາມຊື່ນັ້ນແມ່ນເຢຊູ. ພຣະເຢຊູ ໃຫ້ຄຳສັ່ງຄັ້ງສຸດທ້າຍໃຫ້ແກ່ພວກສາວົກວ່າ, ຈົ່ງອອກໄປແລະສອນທຸກຊົນຊາດ, ຮັບບັບຕິສະມາໃຫ້ເຂົາ ໃນພຣະນາມຊື່ແຫ່ງພຣະບິດາ, ແລະພຣະບຸດ, ແລະພຣະວິນຍານບໍຣິສຸດ [ມັດທາຍ 28:19].

ພວກເຮົາຄວນຈະສັງເກດເບິ່ງຄຳທີ່ພຣະອົງໄດ້ເວົ້າວ່າ ນາມຊື່. ພຣະບິດາ, ພຣະບຸດ, ແລະພຣະວິນຍານບໍຣິສຸດນັ້ນບໍ່ໄດ້ແມ່ນນາມຊື່ຂອງແຕ່ລະບຸກຄົນ, ແຕ່ວ່າເປັນຫົວຂໍ້ຫຼືຕຳແຫນ່ງທີ່ໄດ້ຖືໄວ້ໃນພຣະເຈົ້າ.
ດ້ວຍທາງເຫວາດານັ້ນກໍໄດ້ມີປະກາດສຳແດງພຣະນາມທີ່ຊ່ອຍໃຫ້ລອດພົ້ນ

ຂອງພຣະອົງຢູ່ໃນພຣະທັມຄັມພີສັນຍາໃໝ່: "ນາງຈະປະສູດບຸດຊາຍ, ແລະ ເຈົ້າຈົ່ງເອີ້ນນາມເພິ່ນວ່າ ເຢຊູ: ພຣະອົງຈະຊ່ອຍໄພ່ພົລຂອງພຣະອົງໃຫ້ລອດ ຈາກຄວາມຜິດບາບຂອງເຂົາ" [ມັດທາຍ 1:21].

ພວກສາວົກໄດ້ເຂົ້າໃຈທີ່ວ່າໃນນາມຊື່ ເຢຊູ ນັ້ນໃຊ້ໃນການຮັບບັບຕິມາ, ເລີ່ມຕັ້ງແຕ່ວັນນັ້ນເປັນຕົ້ນມາຄຣິສຕະຈັກ[ເສີດ]ໄດ້ຕັ້ງຂຶ້ນ[ໃນວັນເພັນຕິຄົອດ] ຈົນກວ່າສິ້ນສຸດການປະກາດຂ່າວປະເສີດຂອງເຂົາ.

ເຂົາໄດ້ຮັບບັບຕິສະມາໃຫ້ທຸກຊົນຊາດ [ຊາວຍິວ_ກິຈການ 2:38-41, ສາມາເຣັຽ_ກິຈການ 8:16, ຄົນຕ່າງຊາດ_ກິຈການ 19:5] ໃນພຣະນາມ ຂອງພຣະເຢຊູຄຣິດເຈົ້າ. ໃນຄວາມຈິງແລ້ວ, ເຢຊູແມ່ນນາມຊື່ດຽວນີ້ເທົ່ານັ້ນ ທີ່ໄດ້ປະທານໃຫ້ແກ່ພວກເຮົາເພື່ອຄວາມລອດພົ້ນດ້ວຍວ່າບໍ່ມີນາມຊື່ອື່ນໃດທີ່ ຢູ່ໃຕ້ຟ້າໄດ້ປະທານໃຫ້ມະນຸດຈະລອດ[ກິຈການ 4:12].

<u>...ການຮັບບັບຕິສມາແຫ່ງພຣະວິນຍານບໍຣິສຸດ.</u>

ການຮັບບັບຕິສະມາໃນພຣະວິນຍານບໍຣິສຸດນີ້ແມ່ນການບັງເກີດໃໝ່ຂອງ ຈິດວິນຍານ [ໂຢຮັນ 3:5].

ໃນການບັງເກີດໃໝ່ຂອງຈິດວິນຍານນີ້ມັນເປັນການຈຳເປັນທີ່ຈະເອົາບຸກ ຄົນໃດຄົນນຶ່ງເອົາໄປພຣະຣາຊແຜ່ນດິນຂອງພຣະເຈົ້າໄດ້[ວິຫານຂອງພຣະເຈົ້າ, ເຈົ້າສາວຂອງພຣະຄຣິດ] ແລະຫຼັກຖານພະຍານນັ້ນຄືປາກພາສາແປກ ໆ [ພາສາຕ່າງ ໆ] ຕາມທີ່ພຣະວິນຍານຂອງພຣະເຈົ້າຊົງໂຜດໃຫ້ເຂົາເວົ້ານັ້ນ.

ມັນໄດ້ທຳນວາຍໄວ້ແລ້ວດ້ວຍຜູ້ປະກາດ [ໂຢເອັນ 2:28-29] ແລະອີສາ ຍາ [ອີສາຢາ 28:11]. ໄດ້ປະກາດດ້ວຍໂຢຮັນບັບຕິໂຕ [ມັດທາຍ 3:11], ໄດ້ຊີ້ດ້ວຍພຣະໂລຫິດຂອງພຣະເຢຊູແລະພຣະອົງໄດ້ໃຫ້ຄຳສັນຍາແກ່ພວກສາ ວົກຂອງພຣະອົງ[ໂຢຮັນ 14:26, 15:26].

ພຣະວິນຍານບໍຣິສຸດໄດ້ເຫລົ່ງມາເທິງຊາວຍິວໃນມື້ <u>ວັນເພນຕິຄົອດເຕ</u>[50] [ກິຈການ 2:1-4],

ແລ້ວກໍໄດ້ໃຫ້ພວກສາມາເຣັຽ [ກິຈການ 8:17] ແລະຫຼັງຈາກນັ້ນກໍໄດ້ພວກ ຕ່າງຊາດ [ກິຈການ 10:44-46, 19:6].

ດ້ວຍພຣະສັນຍານັ້ນກໍມີໄວ້ແກ່ທ່ານທັງຫຼາຍ ກັບລູກຫຼານຂອງພວກທ່ານ ແກ່ຄົນທັງປວງທີ່ຢູ່ຫ່າງໄກ ຄືແກ່ທຸກຄົນທີ່ອົງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພວກເຮົາຊົງເອີ້ນມາເຝົ້າພຣະອົງນັ້ນ[ກິຈການ 2:39].

*...ພາສາ*

ການເວົ້າພາສາແປກໆ ໝາຍຄວາມວ່າ ເວົ້າດ້ວຍການອັດສຈັນໃຈຫຼາຍ ເພາະວ່າຕົນເອງໄດ້ເວົ້າແຕ່ບໍ່ຮູ້ວ່າເວົ້າຫຍັງ,ດັ່ງນັ້ນແຫຼະເປັນພຣະວິນຍານບໍຣິສຸດໄດ້ປະທານໃຫ້. ພາສາແປກໆນີ້ຮູ້ໄດ້ດ້ວຍສອງທາງ, ຕາມຫຼລະຂອງແຕ່ລະທາງນັ້ນ:

[1] ການເວົ້າເປັນພາສາແປກໆ ເປັນດັ່ງພຣະວິນຍານພຣະເຈົ້າໂຜດໃຫ້ເວົ້າສັບຫຼັບເປັນພະຍານຫຼັກຖານທີ່ວ່າໄດ້ຮັບບັບຕິສະມາໃນພຣະວິນຍານບໍ °ຣິສຸດ ແລະ

[2] ເປັນຂອງພຣະຣາຊທານເວົ້າພາສາແປກໆນັ້ນ, ທີ່ໄດ້ເວົ້າໄປເຖິງຂໍ້ພຣະທັມຢູ່ໃນ 1 ໂກຣິນໂທ.

1. ການເວົ້າພາສາແປກໆ ດັ່ງທີ່ພຣະວິນຍານຂອງພຣະເຈົ້າຊົງໂຜດໃຫ້ເວົ້ານັ້ນ ເປັນການປະກົດ ພຣະເຈົ້າຊົງໄດ້ປະທານໃຫ້ເປັນເຄື່ອງໝາຍ, ກວ່າການໂຕ້ຖຽງນັ້ນ, ເປັນພະຍານຢ່າງທັມມະຊາດ ຫຼື ເປັນເຄື່ອງໝາຍຂອງການຮັບບັບຕິສມາໃນພຣະວິນຍານບໍຣິສຸດ
[ກິຈການ 2:4, 10:46, 19:6].

ມັນເປັນການທັມນວາຍຂອງຜູ້ປະກາດພຣະທັມອີຊາຍາ ເປັນດັ່ງວ່າ ພັກຜ່ອນແລະການເປັນມາໃໝ່ [ອີຊາຍາ 28:11-12], ພຣະເຢຊູກໍໄດ້ທັມນວາຍວ່າເປັນໝາຍສຳຄັນຈະຕາມຄົນຜູ້ທີ່ເຊື່ອໃນຂ່າວປະເສີດ
[ມາຣະໂກ 16:15] ແລະກໍໄດ້ປະສົບປະການແລ້ວກັບພວກຍິວແລະພວກຕ່າງຊາດເໝືອນກັນ.

2. ຂອງປະທານ, "ການເວົ້າພາສາແປກໆ ຫຼາຍຊະນິດແຕກຕ່າງກັນ", ອາຈານໂປໂລໄດ້ເວົ້າເຖິງເລື້ອງນີ້ຢູ່ 1 ໂກຣິນໂທ 12:1-10 ແລ້ວເພິ່ນກໍໄດ້ຮ້ອງຂໍໃຫ້ໃຊ້ຂອງປະທານນັ້ນໃຫ້ມີກົດລະບຽບໃນ

1 ໂກຣິນໂທ 14:1-14, ໄດ້ມອບໃຫ້ເພື່ອຊ່ອຍມີຄວາມຈະເຣີນສອງຢ່າງຄື: ຕົວເອງ [1 ໂກຣິນໂທ 14:4] ແລະຄວາມຈະເຣີນໃນພຣະວິຫານ [1 ໂກຣິນໂທ 14:27-28]. ໃນເມື່ອມີປະຊຸມນະມັດສະການຢູ່ໃນພຣະວິຫານ ຖ້າຫາກມີການປະທານໃຫ້ເວົ້າພາສາແປກໆເພື່ອນຳຂ່າວຂອງພຣະເຈົ້າໃຫ້ທຸກຄົນຮູ້ນັ້ນ, ແລະການເວົ້າພາສາແປກໆຈະຕ້ອງແປ.

ດັ່ງນັ້ນແຫຼະເມື່ອໃຊ້ຂອງປະທານບໍ່ຖືກຕ້ອງໃນທີ່ໄປແລ້ວ, ມັນຈະຕ້ອງມີກົດລະບຽບເພື່ອໃຊ້ໃຫ້ຖືກຕ້ອງ [1ໂກຣິນໂທ 14:23-28].

ບໍ່ແມ່ນໝົດທຸກຄົນທີ່ເຊື່ອຈະໃຊ້ຫຼືຝຶກຂອງປະທານເວົ້າເປັນພາສາແປກໆ ນີ້, ການງານຂອງ ຂອງປະທານນີ້ມັນກໍແຕກຕ່າງຈາກຂອງພຣະຣາຊທານຂອງພຣະເຈົ້າໄດ້ປະທານໃຫ້ເປັນພຣະຍານຫຼັກຖານໃນເມື່ອໄດ້ຮັບບັບຕິສະມາໃນພຣະວິນຍານບໍຣິສຸດ.

ອາຈານໂປໂລໄດ້ກ່າວວ່າ, "ຢ່າຮ່ວງຫ້າມໃນການເວົ້າພາສາແປກ ໆ [1 ໂກຣິນໂທ 14:39] ແລະ, "ເຮົາຂອບພຣະຄຸນພຣະເຈົ້າ, ເຮົາເວົ້າພາສາແປກ ໆ ຫຼາຍກວ່າໝູ່ເຈົ້າທັງໝົດ" [1 ໂກຣິນໂທ 14:18].

ມີຜູ້ໃດແດ່ໜໍທີ່ຈະສາມາດສອນຫຼືເທສນາແຕກຕ່າງຈາກນີ້ໄປ ?.

## ...ຄວາມບໍຣິສຸດ

ຫຼັງຈາກພວກເຮົາໄດ້ໂຜດໃຫ້ພົ້ນຈາກບາບແລ້ວ, ພວກເຮົາໄດ້ຮັບຄຳສັ່ງ, "ຈົ່ງໄປ, ແລະຢ່າເຮັດບາບອີກ" [ໂຢຮັນ 8:11].

ພວກເຮົາໄດ້ຮັບຄຳສັ່ງໄວ້ໃຫ້ລະຖິ້ມຄວາມຊົ່ວອະທັມແລະກິເລດຕັນຫາຝ່າຍໂລກ ແລະໃຫ້ດຳເນີນຊີວິດຢູ່ໃນສມັຍນີ້ຢ່າງມີສຕິອັນດີຮອບຄອບ ດ້ວຍຍຸດຕິທັມແລະນັບຖືພຣະເຈົ້າຢ່າງຖືກຕ້ອງ [ຕິໂຕ 2:12] ແລະກໍໄດ້ເຕືອນອີກວ່າປະສະຈາກຄວາມບໍຣິສຸດບໍ່ມີໃຜຈະເຫັນພຣະເຈົ້າໄດ້ [ເຮີບເຣີ 12:14].

ພວກເຮົາຄວນຈະສຳແດງພວກເຮົາເອງເປັນບໍຣິສຸດຕໍ່ພຣະເຈົ້າ [ໂຣມ 12:1], ຮັກສາພວກເຮົາເອງອອກຈາກຄວາມເປິເປື້ອນຂອງເນື້ອໜັງແລະຈິດວິນຍານ [2 ໂກຣິນໂທ 7:1],ແລະກໍແຍກພວກເຮົາອອກຈາກຄວາມເປັນຢ່າງໂລກທຸກຢ່າງ[ຢາໂກໂບ 4:4].

ຖ້າຄົນຊອບທັມຈະລອດພົ້ນໄດ້ດ້ວຍຍາກ, ຄົນປະມາດພຣະເຈົ້າແລະຄົນຜິດບາບຈະໄປຢູ່ໃສ? [1 ເປໂຕ 4:18].

ບໍ່ມີຄົນນຶ່ງຄົນໃດໃນຊີວິດນີ້ຢູ່ດ້ວຍຄວາມບໍຣິສຸດໄດ້ໃນອຳນາດຂອງຕົນເອງ, ແຕ່ວ່າຢູ່ໄດ້ດ້ວຍຣິດອຳນາດຂອງພຣະວິນຍານບໍຣິສຸດ. "ທ່ານທັງຫຼາຍຈະໄດ້ຮັບພຣະຣາຊທານຣິດເດດ ເມື່ອພຣະວິນຍານບໍຣິສຸດຈະສະເດັດມາເຖິງພວກທ່ານ" [ກິຈການ 1:8].

## ... ການຊ່ວຍໃຫ້ຫາຍໂລຄຂອງພຣະເຈົ້າ.

ພຣະເຈົ້າໄດ້ຊົງສຳແດງພຣະອົງເອງໃຫ້ຄົນຫຼາຍຊົ່ວຄົນຮູ້ໃນທາງການອັສຈັນຊ່ວຍໃຫ້ຫາຍໂລຄ ແລະພຣະອົງກໍໄດ້ທຳການຊ່ອຍຫາຍໂລຄເປັນພິເສດສຳຫຼັບທຸກຄົນທີ່ຈະເຂົ້າມາຫາພຣະອົງໃນຄວາມເຊື່ອແລະການເຊື່ອຟັງ. ການຊ່ອຍໃຫ້ຫາຍໂລຄຂອງພຣະເຈົ້ານີ້ໄດ້ຈ່າຍໄວ້ແລ້ວໂດຍພຣະໂລຫິດຂອງພຣະເຢຊູຄຣິດ, ດ້ວຍພິເສດແລ້ວໂດຍແປ້ວແຜຂອງພຣະອົງ [ອາຊາຍາ 53:5, ມັດທາຍ 8:16-17, 1 ເປໂຕ 2:24].

ພຣະເຢຊູໄດ້ໄປທຸກແຫ່ງຫົນຊ່ອຍໃຫ້ຜູ້ທີ່ເຈັບໄດ້ຫາຍໂລຄ [ມັດທາຍ 4:23-24], ແລະພຣະອົງກໍໄດ້ສັ່ງໃຫ້ພວກອັຄສາວົກເໝືອນກັນ [ມັດທາຍ 10:8]. ພຣະອົງກໍໄດ້ເວົ້າເຖິງເລື່ອງຜູ້ທີ່ມາເຊື່ອໃນຂ່າວປະເສີດນັ້ນວ່າ, "ເມື່ອເຂົາວາງມືໃສ່ຄົນເຈັບປ່ວຍແລ້ວຄົນເຫຼົ່ານັ້ນຈະດີເປັນປົກກະຕິ" [ມາຣະໂກ 16:18]. ການຊ່ອຍໃຫ້ຫາຍໂລຄອັນຍິ່ງໃຫ່ຍແລະການອັສຈັນໄດ້ນຳພວກສາວົກໄປທຸກແຫ່ງຫົນທີ່ຂ່າວປະເສີດໄດ້ປະກາດ.

ບໍ່ມີພະຍາດແລະຄວາມເຈັບປ່ວຍອັນໃດທີ່ຍາກສຳຫຼັບພຣະເຈົ້າ. ທຸກຄົນໃນພວກເຮົາ, ລູກຫຼານຂອງພວກເຮົາ, ຫຼືໝູ່ເພື່ອນຂອງພວກເຮົາສາມາດຈະຊ່ອຍໃຫ້ຫາຍໄດ້ດ້ວຍຣິດເດດຂອງພຣະເຈົ້າ.

"ມີຜູ້ໃດເຈັບໄຂ້ໄດ້ປ່ວຍຈົ່ງໃຫ້ຜູ້ນັ້ນເຊີນບັນດາເຖົ້າແກ່ໃນຄຣິສຕະຈັກມາອ້ອນວອນສຳຫຼັບຕົນ ແລະເອົານ້ຳມັນທາຜູ້ນັ້ນໃນພຣະນາມຂອງອົງພຣະຜູ້ເປັນເຈົ້າ.

ຄຳອ້ອນວອນທີ່ປະກອບດ້ວຍຄວາມເຊື່ອຈະເຮັດໃຫ້ຜູ້ປ່ວຍນັ້ນລອດພົ້ນ

ແລະອົງພຣະຜູ້ເປັນເຈົ້າຈະຊົງໂຜດໃຫ້ຜູ້ນັ້ນລຸກຂຶ້ນດີເປັນປົກກະຕິ ແລະຖ້າຜູ້ໃດທຳຜິດເຮັດບາບ ພຣະອົງກໍຈະຊົງໂຜດອະພັຍໃຫ້. ເຫດສັນນັ້ນເຈົ້າທັງຫຼາຍຈົ່ງສາຣະພາບຜິດຂອງຕົນຕໍ່ກັນແລະກັນ ຈົ່ງອ້ອນວອນເພື່ອກັນແລະກັນ ເພື່ອເຈົ້າທັງຫຼາຍຈະໄດ້ດີພຍາດ" [ຢາໂກໂບ 5:14-16].

## ...ການສະເດັດມາຄັ້ງທີ່ສອງຂອງພຣະຄຣິດ.

ພຣະເຢຊູຄຣິດຈະສະເດັດກັບມາໂລກໃນພຣະຮ່າງກາຍເໝືອນຢ່າງທີ່ພຣະອົງໄດ້ສະເດັດຂຶ້ນເມືອສວັນນັ້ນ[ກິຈການ 1:11].
ພຣະອົງຈະມາຮັບຜູ້ທີ່ມີຄວາມບໍຣິສຸດໄປກັບພຣະອົງ [ເຈົ້າສາວຂອງພຣະອົງ, ຄຣິສຕະຈັກຂອງພຣະອົງ] ຜູ້ທີ່ຮັບຄວາມຊ່ອຍໃຫ້ລອດພົ້ນດ້ວຍພຣະໂລຫິດຂອງພຣະອົງ, ບັງເກີດໃໝ່ຈາກນ້ຳແລະພຣະວິນຍານ, ແລະຜູ້ນັ້ນກໍພົບເຫັນໃນການສັດຊື່ເວລາພຣະອົງຈະສະເດັດມາ.

"ດ້ວຍວ່າຈະມີຄຳສັ່ງອັນດັງ, ຈະມີສຽງຂອງອັຄເທວະດາ, ແລະສຽງແກຂອງພຣະເຈົ້າ ແລ້ວອົງພຣະຜູ້ເປັນເຈົ້າຈະສະເດັດລົງມາຈາກສວັນພວກຄົນທີເຊື່ອໃນພຣິດທີ່ຕາຍໄປແລ້ວກໍຈະຄືນຂຶ້ນມາກ່ອນ.
ຫຼັງຈາກນັ້ນເຮົາທັງຫຼາຍຜູ້ມີຊີວິດຍັງເປັນຢູ່ກໍຈະຖືກຮັບຂຶ້ນໄປໃນເມກພ້ອມກັນກັບຄົນພວກນັ້ນ ແລະຈະພົບອົງພຣະຜູ້ເປັນເຈົ້າໃນຟ້າອາກາດ ຢ່າງນັ້ນແລະເຮົາຈະຢູ່ນຳອົງພຣະຜູ້ເປັນເຈົ້າເປັນນິດ" [1 ເທຊະໂຣນິກ 4:16-17].

"ຈະຊົງຮັບຄົນນຶ່ງໄປ ຈະປະຄົນນຶ່ງໄວ້" [ລູກາ 17:34].
ພວກເຮົາຕຽມພ້ອມແລ້ວຫຼືຍັງ? ເຄື່ອງໝາຍເຖິງການສະເດັດມາຂອງພຣະອົງກໍຊົງປະກົດຂຶ້ນທຸກແຫ່ງຫົນ. ວັນເວລາອັນໂຫດຮ້າຍກໍມີຢູ່ດຽວນີ້ແລ້ວ, ຄັ້ງຄົນຂຶ້ນນັບຖືພຣະເຈົ້າຢ່າງຖືກຕ້ອງ ແຕ່ຣິດເດັດຂອງພຣະເຈົ້ານັ້ນປະຕິເສດເສັຽ, ສັງຄົມແລະການປົກຄອງກໍໄດ້ເສື່ອມເສັຽໄປ, ມະນຸດກໍມີໃຈທີ່ເຕັມໄປດ້ວຍການອວດຕົວຈອງຫອງ, ມັກໃນການປ້ອຍດ່າ, ບໍ່ມີຄວາມບໍຣິສຸດ, ຮັກຄວາມຊົ່ວ, ແລະຮັກການສນຸກສນານຫຼາຍກວ່າຮັກພຣະເຈົ້າ [2 ຕີໂມທຽວ 3:1-13].

ຄົນຫຼາຍຄົນຈະແລ່ນໄປທາງນີ້ໄປທາງນັ້ນ ແລະຄວາມຮູ້ຈະມາກທະວີຂຶ້ນ

[ດານຽນ 12:4], ມີການກົດຂີ່ຄົນເຫ່ງຕໍ່ຊາວຢິວແລະການກັບຄືນມາເມືອງ ຟາລິດຕຽນ[ລູກາ 21:24], ແລະຈະໄດ້ເຫັນສິ່ງອື່ນອີກ ອັນນີ້ມັນເປັນເຄື່ອງ ໝາຍເຖິງການສະເດັດມາຂອງອົງພຣະເຢຊູໃກ້ຈະຮອດແລ້ວ.

ເສິກສົງຄາມ, ການມີເສິກສົງຄາມເກີດຂຶ້ນຫຼາຍບ່ອນ, ການກັ້ນດານອາ ຫານແຜ່ນດິນໄຫວຫຼາຍແຫ່ງ, ລົມພະຍຸໃຫຍ່, ນ້ຳຖ້ວມ, ຊາວໂລກທຸກຮ້ອນ ໃຈ, ມີຄວາມສັບສົນເກີດຂຶ້ນ,ແລະຄົນທົ່ວໄປກໍມີໂລກຫົວໃຈຫວາຍເກີດ ຂຶ້ນ, ເພາະມີຄວາມຢ້ານກົວທີ່ໄດ້ຍິນຄຳເວົ້າເຖິງເລື້ອງການສະເດັດມາຂອງ ພຣະເຢຊູຄຣິດໃກ້ຈະມາເຖິງແລ້ວ[ມັດທາຍ 24:6, ລູກາ 21:25-28].

"ຈົ່ງຈັດແຈງຕົວໄວ້ເພື່ອຕ້ອນຮັບພຣະເຈົ້າ," [ອາໂມດ 4:12].

## ...ການເປັນຄືນຂຶ້ນມາຈາກຕາຍ.

ຈະໄດ້ມີການເປັນຄືນຂຶ້ນມາຈາກຕາຍຂອງໝົດທຸກຄົນທີ່ຕາຍນັ້ນ, ທັງຄົນ ມີສິນທັມແລະບໍ່ມີສິນທັມ.

"ຢ່າປະລາດໃຈໃນຂໍ້ນີ້ ເພາະໃກ້ຈະເຖິງເວລາທີ່ບັນດາຜູ້ທີ່ຢູ່ໃນຂຸມຝັງສົບ ຈະໄດ້ຍິນພຣະສຸຣະສຽງຂອງພຣະອົງ, ແລະຈະໄດ້ອອກມາ. ບັນດາຜູ້ທີ່ໄດ້ ເຮັດການດີກໍຄືນຊູຊີວິດ ແລະບັນດາຜູ້ເຮັດການຊົ່ວກໍຄືນສູ່ພິພາກສາ" [ໂຢຮັນ 5:28-29].

"ຂ້າພະເຈົ້າໄດ້ເຫັນບັນດາຜູ້ທີ່ຕາຍແລ້ວ ທັງຜູ້ໃຫຍ່ແລະຜູ້ນ້ອຍ ຢືນຢູ່ຕໍ່ໜ້າພຣະຣາຊບັນລັງ....

ທະເລກໍສົ່ງຄົນທັງຫຼາຍທີ່ຕາຍໃນທະເລຄືນ ຄວາມຕາຍແລະແດນມໍຣະນາ ກໍສົ່ງຄົນທັງຫຼາຍທີ່ຢູ່ໃນແດນນັ້ນຄືນ," [ພຣະນິມິດ 20:12-13].

[ເບິ່ງ ດານຽນ 12:2, 1 ໂກຣິນໂທ 15:13-23].

## ...ການຕັດສິນລົງໂທດ.

"ມັນໄດ້ຖືກກຳນົດໄວ້ແລ້ວວ່າມະນຸດຈະຕ້ອງຕາຍເທື່ອດຽວ ຫຼັງຈາກນັ້ນ ຈະມີການຊົງພິພາກສາ" [ເຮັບເຣີ 9:27] ດ້ວຍເຫດການດັ່ງນີ້ແລ້ວ ຈິ່ງຈະ ມີການຄືນຂຶ້ນມາຈາກຕາຍສຳຫຼັບທຸກໆຄົນ, "ດ້ວຍວ່າຈຳເປັນທີ່ເຮົາທຸກຄົນ

ຈະຕ້ອງປະກົດຕົວຕໍ່ໜ້າບັນລັງພິພາກສາຂອງພຣະຄຣິດ ເພື່ອທຸກຄົນຈະໄດ້ຮັບສິ່ງກັບການທີ່ຕົນໄດ້ເຮັດໃນຮ່າງກາຍນີ້ ແລ້ວແຕ່ຈະດີຫຼືຊົ່ວ"
[2 ໂກຣິນໂທ 5:10].

ຈຸດໝາຍປາຍທາງອັນຊົ່ວນິຣັນຂອງດວງຈິດວິນຍານແຕ່ລະດວງນັ້ນຈະຕ້ອງຂຶ້ນຢູ່ກັບອົງພຣະເຈົ້າຜູ້ທີ່ຊອບທັມ ອົງທີ່ຮູ້ຈັກຄວາມເລິກລັບໃນຈິດໃຈຂອງແຕ່ລະຄົນນັ້ນ.

"ບັນດາປະຊາຊາດຕ່າງໆ ຈະຖືກຊົງໂຮມກັນຕໍ່ພຣະພັກຂອງພຣະອົງ ແລະພຣະອົງຈະຊົງແຍກເຂົາອອກຈາກກັນ ເໝືອນຜູ້ລ້ຽງສັດແຍກຝູງແກະອອກຈາກຝູງແບ້. ຝູງແກະນັ້ນຈະຈັດໃຫ້ຢູ່ເບື້ອງຂວາພຣະຫັດຂອງພຣະອົງ ແຕ່ຝູງແບ້ນັ້ນຈະຊົງຈັດໃຫ້ຢູ່ເບື້ອງຊ້າຍ.

ເມື່ອນັ້ນພຣະມະຫາກະສັດຈະຊົງກ່າວແກ່ບັນດາຜູ້ທີ່ຢູ່ທາງພຣະຫັດຂວາຂອງພຣະອົງວ່າ ພວກທ່ານທີ່ໄດ້ຮັບພຣະພອນຈາກພຣະບິດາຂອງເຮົາເອີຍ ຈົ່ງມາຮັບເອົາຣາຊອານາຈັກ ຊຶ່ງໄດ້ຊົງຈັດຕຽມໄວ້ສຳຫຼັບທ່ານຕັ້ງແຕ່ຕົ້ນເດີມໂລກ....

ເມື່ອນັ້ນພຣະອົງຈະຊົງກ່າວກັບບັນດາຜູ້ທີ່ຢູ່ເບື້ອງພຣະຫັດຊ້າຍຂອງພຣະອົງວ່າ ສູທັງຫຼາຍຜູ້ທີ່ຖືກປ້ອຍເອນ, ຈົ່ງຖອຍໜີຈາກເຮົາເຂົ້າໄປໃນໄຟທີ່ໄໝ້ຢູ່ເປັນນິດຊຶ່ງຊົງຈັດຕຽມໄວ້ສຳຫຼັບພຍາມານກັບບໍຣິວານຂອງມັນ....

ແລ້ວພວກເຫຼົ່ານີ້ຈະອອກໄປສູ່ໂທດອັນຕລອດໄປເປັນນິດ ແຕ່ພວກສິນທັມກໍເຂົ້າສູ່ຊີວິດອັນຕລອດໄປເປັນນິດ" [ມັດທາຍ 25:32-34,41,46].

## ພຣະບັນຍັດ

ເປັນພຣະທັມຂອງພຣະເຈົ້າ

## ຜູ້ຕັດສິນ

ແມ່ນພຣະເຈົ້າຜູ້ຊົງຊອບທັມ

**ຈະຖືກຕັດສິນ**

ຈິດວິນຍານຂອງພວກເຮົາ

ໂອກາດໃນຊີວິດນີ້ຈະຜ່ານໄປ **ແລະ** ໃນວັນສຸດທ້າຍຈະໄດ້ເກັບກ່ຽວ

ມີຄຳຕັດສິນສອງຄຳທີ່ພວກເຮົາທຸກຄົນຈະພົບຄື

ຊີວິດ ຫຼື ຄວາມຕາຍ

ຊີວິດ ຫຼື ຄວາມຕາຍ

ຊີວິດ ຫຼື ຄວາມຕາຍ

ຊີວິດ ຫຼື ຄວາມຕາຍ

http://sayadi-al-nas.com